ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

--------------------

ແຂວງອັດຕະປື

ເລກທີ 622 / ຈຂ.ອປ

ອັດຕະປື, ວັນທີ 28 ມິຖຸນາ 2016

**ຂໍ້ຕົກລົງ**

**ຂອງເຈົ້າແຂວງ**

**ວ່າດ້ວຍການອະນຸມັດຂອບເຂດພື້ນທີ່ ດິນແຫຼ່ງທ່ອງທ່ຽວ**

**ຕາດຫົວຄົນ ບ້ານໃຫ່ຍໝື່ນຫົວເມືອງ ເມືອງສາມັກຄີໄຊ ເປັນເຂດສະຫງວນເພື່ອການທ່ອງທ່ຽວ**

- ອີງຕາມ: ກົດໝາຍການປົກຄອງທ້ອງຖິ່ນ ແຫ່ງສປປ ລາວ ສະບັບເລກທີ 03 /ສພຊ, ລົງວັນທີ 21 ຕຸລາ 2003 ໝວດທີ III ມາດຕາ14, ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ.
- ອີງຕາມ: ໃບສະເໜີຂອງພະແນກ ຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວແຂວງ ສະບັບເລກທີ680/ຖວທ,ລົງວັນທີ15/6/2016

**ເຈົ້າແຂວງອອກຂໍ້ຕົກລົງ:**

ມາດຕາ01: ເຫັນດີອະນຸມັດເນື້ອທີ່ດິນແຫຼ່ງທ່ອງທ່ຽວ ຕາດຫົວຄົນ ຢູ່ບ້ານໃຫ່ຍໝື່ນຫົວເມືອງ ເມືອງສາມັກຄີໄຊ ແຂວງອັດຕະປື ເປັນເຂດສະຫງວນເພື່ອການທ່ອງທ່ຽວ ຈຳນວນ 718 ເຮັກຕາ ເຊິ່ງມີຊາຍແດນຕິດຈອດດັ່ງນີ້:

- ທິດເໜືອ ຕິດກັບສາຍນ້ຳເຊນ້ອຍ — ຍາວ 1,000 ແມັດ
- ທິດໃຕ້ ຕິດກັບເຮືອນພໍ່ແມ່ປະຊາຊົນ ບ້ານໃຫ່ຍໝື່ນຫົວເມືອງ — ຍາວ 625 ແມັດ
- ທິດຕາເວັນອອກ ຕິດກັບດິນປ່າ ແລະ ດິນຈັບຈ່ອງ — ຍາວ 1,406 ແມັດ
- ທິດຕາເວັນຕົກ ຕິດກັບສາຍນ້ຳເຊນ້ຳນ້ອຍ — ຍາວ 1,825 ແມັດ

ມາດຕາ 02: ມອບໃຫ້ພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ປະສານສົມທົບກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ເພື່ອອອກອະນຸຍາດນຳໃຊ້ດິນໃຫ້ພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ເພື່ອນຳໃຊ້ ແລະ ຄຸ້ມຄອງ.

ມາດຕາ 03 ພາກສ່ວນການຈັດຕັ້ງທຸກຂັ້ນ, ຂະແໜງການທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 03: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງ.

(ລາຍເຊັນ ແລະ ກາປະທັບ: ແຂວງອັດຕະປື)

ສຸກສະໄໝ ຈັນທະມາດ

ບ່ອນສົ່ງ

- ຫ້ອງວ່າການປົກຄອງແຂວງ 01 ສະບັບ
- ພະແນກ ຖວທ ແຂວງ 01 ສະບັບ
- ພະແນກ ຊສ ແຂວງ 01 ສະບັບ
- ສຳເນົາ 01 ສະບັບ